ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ປະທານປະເທດ

ເລກທີ...403.../ປປທ

ນະຄອນຫຼວງວຽງຈັນ, ວັນທີ 06 ພະຈິກ 2019

# ລັດຖະດຳລັດ
# ຂອງປະທານປະເທດ
## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
## ວ່າດ້ວຍ ການຕົກລົງໃຫ້ ລົງນາມສົນທິສັນຍາ ໃນນາມ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

- ອີງຕາມ ລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2015) ໝວດທີ VIມາດຕາ 67 ຂໍ້ 14;
- ອີງຕາມ ກົດໝາຍວ່າດ້ວຍສົນທິສັນຍາ ແລະ ສັນຍາສາກົນ ສະບັບເລກທີ 18/ສພຊ, ລົງວັນທີ 08 ພຶດສະພາ 2017 ມາດຕາ 26 ຂໍ້ 1;
- ອີງຕາມ ໜັງສືສະເໜີ ຂອງ ນາຍົກລັດຖະມົນຕີ ສະບັບ ເລກທີ 122 /ນຍ, ລົງວັນທີ 16 ຕຸລາ 2019.

**ປະທານປະເທດ**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ:**

**ມາດຕາ 1** ຕົກລົງໃຫ້ ທ່ານ ພັນໂທ ວິໄລ ຫລ້າຄຳຟອງ ລັດຖະມົນຕີ ກະຊວງປ້ອງກັນຄວາມສະຫງົບເປັນຜູ້ຕາງໜ້າ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ລົງນາມສົນທິສັນຍາ ວ່າດ້ວຍການໂອນຕົວຜູ້ຖືກຕັດສິນລົງໂທດ ລະຫວ່າງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ສາທາລະນະລັດ ສັງຄົມນິຍົມ ຫວຽດນາມ.

**ມາດຕາ 2** ມອບໃຫ້ ລັດຖະບານ ແລະ ຜູ້ໄດ້ຮັບການມອບໝາຍ ຈັດຕັ້ງປະຕິບັດ ຕາມຂັ້ນຕອນ ຂອງ ກົດໝາຍ ແລະ ລະບຽບການ.

**ມາດຕາ 3** ລັດຖະດຳລັດສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

**ປະທານປະເທດ ແຫ່ງ ສປປ ລາວ**

**ບຸນຍັງ ວໍລະຈິດ**